**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການປົກຄອງແຂວງ

ເລກທີ...06.../ປຄປຂ
ອັດຕະປື,ວັນທີ 28 ສິງຫາ 2026

# ຄຳສັ່ງແນະນຳ
# ກ່ຽວກັບການເຮັດສັນຍາກະສິກຳ

- ອີງຕາມ ມາດຕາ 20, ຂໍ້ທີ 16 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 78/ສພຊ, ລົງວັນທີ 20 ມີນາ ປີ 2025;
- ອີງຕາມ ດຳລັດວ່າດ້ວຍກະສິກຳແບບມີສັນຍາ ສະບັບເລກທີ 56/ລບ, ລົງວັນທີ 27 ມັງກອນ2025;
- ອີງຕາມ ຄຳສັ່ງແນະນຳຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 2030/ກສ,ວັນທີ 31 ຕຸລາ 2025;
- ອີງຕາມ ໜັງສືສະເໜີຂອງພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ສະບັບເລກທີ 2484/ກສຂ, ລົງວັນທີ 23 ມິຖຸນາ 2026.

ໄລຍະຜ່ານມາອີງການຈັດຕັ້ງພັກ-ລັດຂັ້ນແຂວງ, ເມືອງ ແລະ ບ້ານລວມທັງການຈັດຕັ້ງສັງຄົມ ແລະ ອີງການຈັດຕັ້ງສາກົນຍາມໃດກໍ່ໄດ້ເອົາໃຈໃສ່ຊຸກຍູ້ ແລະ ສົ່ງເສີມການຜະລິດກະສິກຳແບບມີສັນຍາ ຕິດພັນກັບການສ້າງວຽກເຮັດງານທຳ ເພື່ອສ້າງລາຍຮັບ ແລະ ແກ້ໄຂບັນຫາຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າຊາວແຂວງອັດຕະປື; ຊາວກະສິກອນກຸ່ມຜູ້ຜະລິດກະສິກຳ, ນິຕິບຸກຄົນ ແລະ ສະຫະກອນປະເພດຕ່າງໆໄດ້ເຕີບໃຫຍ່ຂະຫຍາຍຕົວປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໄປຄຽງຄູ່ກັບການຜະລິດເປັນສິນຄ້າບາງເມືອງກໍ່ຍັງບໍ່ທັນໄດ້ຫັນເຂົ້າສູ່ການຜະລິດແບບສັນຍາ ຫຼື ມີແລ້ວ ແຕ່ກໍ່ຍັງບໍ່ທັນເຂົ້າລະບົບລັດຄຸ້ມຄອງ ຈຶ່ງເກີດມີຂໍ້ຈຳກັດໃນການເຂົ້າເຖິງປັດໄຈການຜະລິດເຕັກນິກ, ການຕະຫຼາດ ແລະ ບາງເມືອງກໍ່ມີໜໍ່ແໜງໃນການຜະລິດກະສິກຳແບບມີສັນຍາ ແຕ່ກໍ່ຍັງບໍ່ທັນມີຄວາມເອກະພາບໃນການຈັດຕັ້ງປະຕິບັດ ເພື່ອເປັນການປັບປຸງ ແລະ ແກ້ໄຂບັນຫາດັ່ງກ່າວໃຫ້ຫຼຸດຜ່ອນຄວາມສ່ຽງອາດຈະເກີດຂຶ້ນໃນສະເພາະໜ້າ ແລະ ຍາວນານທັງເປັນການຮັບປະກັນການປະຕິບັດສັນຍາດັ່ງກ່າວໃຫ້ໄດ້ຮັບໝາກຜົນດີຂຶ້ນເທື່ອລະກ້າວ.

## ປະທານຄະນະກຳການປົກຄອງແຂວງ ອອກຄຳສັ່ງແນະນຳ:

**I. ຈຸດປະສົງຄວາມໝາຍຄວາມສຳຄັນ:**

**1. ຈຸດປະສົງ**: ຄຳແນະນຳສະບັບນີ້ໄດ້ແນະນຳກ່ຽວກັບຫຼັກການ ແລະ ຂັ້ນຕອນການເຮັດສັນຍາກະສິກຳໃຫ້ລະອຽດຈະແຈ້ງເຂົ້າໃຈງ່າຍ ແລະ ຈັດຕັ້ງປະຕິບັດໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວແຂວງ ເພື່ອເປັນການຜັນຂະຫຍາຍ ດຳລັດວ່າດ້ວຍກະສິກຳແບບມີສັນຍາ ໝວດທີ 3, 4 ແລະ 5 ຂອງດຳລັດວ່າດ້ວຍກະສິກຳແບບມີສັນຍາສະບັບເລກທີ 56/ລບ, ລົງວັນທີ 27/1/2025 ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນລາຄາຜົນຜະລິດກະສິກຳທັງແກ້ໄຂບັນຫາຂໍ້ຈຳກັດດ້ານທີ່ດິນ, ດ້ານປັດໄຈການຜະລິດເຕັກນິກ, ການ

ຕະຫຼາດລວມທັງການເຂົ້າເຖິງແຫຼ່ງທຶນແນໃສ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງຕາມທິດສີຂຽວ ແລະ ຍືນຍົງ;

2. **ຄວາມສຳຄັນຂອງສັນຍາ:** ສັນຍານີ້ມີຄວາມສຳຄັນຕໍ່ຊາວກະສິກອນ ກຸ່ມຜະລິດ ແລະ ສະຫະກອນຜູ້ປະກອບການໃນການຜະລິດ ແລະ ການປຸງແຕ່ງການບໍລິການກະສິກຳ ເຮັດໃຫ້ຊາວກະສິກອນ ເຂົ້າເຖິງປັດໄຈການຜະລິດ, ສິນເຊື່ອເຕັກໂນໂລຊີໃໝ່ໆ, ຄູ່ສັນຍາມີຜົນປະໂຫຍດຮ່ວມກັນ ແລະ ຄວາມເຊື່ອໝັ້ນລະຫວ່າງຄູ່ສັນຍາ, ວິທີການຜະລິດໄດ້ຮັບການປັບປຸງຕາມມາດຖານ ແລະ ຄວາມຕ້ອງການຂອງການຕະຫຼາດ; ຊາວກະສິກອນກຸ່ມຜູ້ຜະລິດ ແລະ ສະຫະກອນເຂົ້າເຖິງປັດໄຈການຜະລິດສິນເຊື່ອແບບພັນພ້ອມທັງໄດ້ຮັບການຊ່ວຍເຫຼືອທາງດ້ານວິຊາການ ແລະ ໄດ້ຮັບໂອກາດທາງດ້ານທັກສະເຕັກໂນໂລຊີໃໝ່ໆສາມາດເຂົ້າເຖິງຕະຫຼາດໄດ້ດີຂຶ້ນ ສ່ວນຜູ້ປະກອບການໄດ້ຮັບຄວາມສະດວກຫຼາຍດ້ານເປັນຕົ້ນ: ສາມາດແກ້ໄຂບັນຫາດ້ານການຂາຍທີ່ດິນ, ແຮງງານຜົນຜະລິດໄດ້ມາດຕະຖານທັງປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຕ້ອງການດ້ານການຕະຫຼາດ ທັງໄດ້ຮັບນະໂຍບາຍການສົ່ງເສີມຈາກພາກລັດ.

## II. ຂໍ້ແນະນຳເພີ່ມເຕີມບາງເນື້ອໃນ:

### 1. ລັກສະນະຂອງສັນຍາກະສິກຳມີ 2 ລັກສະນະດັ່ງນີ້:

- ສັນຍາສອງຝ່າຍ ແມ່ນການຕົກລົງລະຫ່ວາງ ແມ່ນຄູ່ສັນຍາທີ່ມີພຽງສອງຝ່າຍກ່ຽວກັບການຜະລິດການປຸງແຕ່ງການບໍລິການ.
- ສັນຍາຫຼາຍຝ່າຍ ແມ່ນການຕົກລົງລະຫ່ວາງຄູ່ສັນຍາທີ່ມີຫຼາຍກ່ວາສອງຝ່າຍເຊັ່ນ: 3 ຝ່າຍ, 4 ຝ່າຍ ຫຼື ຫຼາຍກ່ວານັ້ນ, ການຜະລິດ, ການປຸງແຕ່ງ ແລະ ການບໍລິການ.

### 2. ເງື່ອນໄຂຂອງສັນຍາກະສິກຳ:

ສັນຍາກະສິກຳສ້າງຂຶ້ນຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

1) ກຳນົດເປົ້າໝາຍຂອງສັນຍາໃຫ້ຊັດເຈນ, ຕົວຈິງ ແລະ ຖືກຕ້ອງຕາມກົດໝາຍຊຶ່ງບໍ່ຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ປະຕິບັດໄດ້ດ້ວຍການກຳນົດເປົ້າໝາຍຂອງສັນຍາ ມີລັກສະນາສະເພາະເຈາະຈົງຕາມປະເພດ ແລະ ກິດຈະກຳທີ່ຈະປະຕິບັດຮ່ວມກັນເປັນຕົ້ນແມ່ນ ການຜະລິດ, ການປຸງແຕ່ງ ແລະ ການບໍລິການກະສິກຳຕ່າງຝ່າຍມີຄວາມພ້ອມ ແລະ ສາມາດໃນການຈັດຕັ້ງປະຕິບັດໃຫ້ເກີດຜົນເປັນຈິງ;
2) ຄູ່ສັນຍາມີຄວາມສະໝັກໃຈ ໂດຍປະສະຈາກການຫຼົງຜິດ, ຫຼອກລວງ, ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ຫຼື ອັບປະໂຫຍດຝ່າຍໃດຝ່າຍໜຶ່ງຊຶ່ງແຕ່ລະຝ່າຍມີຄວາມພໍໃຈໃນການເຮັດສັນຍາຮ່ວມກັນໃນການຮັບຮູ້ຂໍ້ມູນອັນຄົບຖ້ວນທີ່ເຂົ້າໃຈຢ່າງຈະແຈ້ງໃນການຕົກລົງສັນຍາ;
3) ຄູ່ສັນຍາມີຄວາມສາມາດການປະພຶດດ້ວຍຕົນເອງໃນວັນເຊັນສັນຍາ, ເຊິ່ງຜູ້ເຊັນສັນຍາຕ້ອງມີອາຍຸ 18 ປີຂຶ້ນໄປ, ບໍ່ເປັນບ້າ ແລະ ເສຍຈິດ ກໍລະນີເປັນກຸ່ມການຜະລິດ, ສະຫະກອນ ແລະ ຜູ້ປະກອບການຕ້ອງມີໃບອະນຸຍາດສ້າງຕັ້ງ, ໃບທະບຽນ ຫຼື ເອກະສານຢັ້ງຢືນຕົວຕົນ;
4) ຄູ່ສັນຍາຝ່າຍໃດຝ່າຍໜຶ່ງຕ້ອງປະກອບອົງປະກອບກະສິກຳແບບມີສັນຍາທີ່ດິນ, ແຮງງານ, ເງິນ, ປັດໄຈການຜະລິດ, ກົນຈັກການຜະລິດ, ເຕັກນິກການເກັບກ່ຽວ, ການປຸງແຕ່ງ ແລະ ການຕະຫຼາດແຕ່ສອງອົງປະກອບຂຶ້ນໄປ ໂດຍໃຫ້ຄູ່ສັນຍາແຕ່ລະຝ່າຍ ແຕ່ຢ່າງນ້ອຍຕ້ອງມີສອງອົງປະກອບຂຶ້ນໄປ ທີ່ກຳນົດໄວ້ໃນ 9 ອົງປະກອບເພື່ອມາປະກອບໃນການເຮັດສັນຍາກະສິກຳຮ່ວມກັນ.
   - **ສັນຍາກະສິກຳສອງຝ່າຍເຊັ່ນ:** ກຸ່ມຜະລິດມີ: ດິນ, ມີແຮງງານ; ສ່ວນຜູ້ປະກອບການມີ: ເງິນ, ເຕັກນິກ ແລະ ຕະຫຼາດ;
   - **ສັນຍາກະສິກຳຫຼາຍຝ່າຍເຊັ່ນ:** ກຸ່ມຜະລິດມີ: ດິນ, ມີແຮງງານ ແລະ ເຕັກນິກ; ສ່ວນຜູ້ປະກອບການມີ: ປັດໄຈການຜະລິດ, ເງິນ ແລະ ຕະຫຼາດ; ສຳລັບສະຫະກອນມີ: ເຄື່ອງມືກົນຈັກການຜະລິດ ແລະ ການປຸງແຕ່ງ.

## III. ບາງເນື້ອໃນຂອງສັນຍາກະສິກຳ:

ເນື້ອໃນຂອງສັນຍາກະສິກຳໃຫ້ນຳໃຊ້ແບບພິມໂດຍມີເນື້ອໃນດັ່ງນີ້:

1. **ວັນເວລາ ແລະ ສະຖານທີ່ເຮັດສັນຍາ**: ຕ້ອງກໍານົດວັນທີ ແລະ ເວລາໃນການເຊັນສັນຍາລວມທັງສະຖານທີ່ເຊັນ, ບ້ານ, ຕາແສງ, ເມືອງ ຫຼື ແຂວງ, ບ່ອນເຊັນສັນຍາ.
2. **ຊື່ ແລະ ນາມສະກຸນ ບ່ອນຢູ່ຂອງຄູ່ສັນຍາ:** ຕ້ອງກໍານົດລະອຽດ ຊື່ ແລະ ນາມສະກຸນ, ເບີໂທຕິດຕໍ່, ບ່ອນຢູ່ ຫຼື ສະຖານທີ່ຕັ້ງຂອງຄູ່ສັນຍາ.
3. **ເປົ້າໝາຍສັນຍາ, ລາຄາ, ກໍານົດເວລາປະຕິບັດ, ການຊໍາລະ ແລະ ການນໍາສົ່ງ:** ເປົ້າໝາຍການສັນຍາສະເພາະເຈາະຈົງຕາມປະເພດ ແລະ ກິດຈະກໍາທີ່ປະຕິບັດຮ່ວມກັນ, ການກໍານົດເວລາ ແມ່ນລາຄາຂຶ້ນລົງຕາມທ້ອງຕະຫຼາດ ແຕ່ຕ້ອງກໍານົດລາຄາຄໍ້າປະກັນຕໍ່າສຸດ ບົນພື້ນຖານການເຈລະຈາການຕໍ່ລອງລະຫວ່າງຄູ່ສັນຍາກໍານົດເວລາປະຕິບັດ ແມ່ນໄລຍະເວລາປະຕິບັດສັນຍາຕັ້ງແຕ່ວັນມີຜົນສັກສິດ, ວັນໝົດອາຍຸ ແລະ ເງື່ອນໄຂສັນຍາການຊໍາລະ, ມີການກໍານົດອັດຕາສ່ວນຮູບການ ແລະ ວິທີການຊໍາລະການນໍາສົ່ງ, ການກໍານົດສະຖານທີ່ຮັບສົ່ງສິນຄ້າ, ຜູ້ຮັບຜິດຊອບໃນການຂົນສົ່ງ, ການກວດກາມາດຕະຖານການຜະລິດ, ມາດຖານສິນຄ້າປະລິມານ ແລະ ຄຸນນະພາບ;
4. **ສະຖານທີ່ໃນການປະຕິບັດສັນຍາ**: ແມ່ນສະຖານທີ່ຜະລິດ, ປຸງແຕ່ງ ຫຼື ການບໍລິການກະສິກໍາ ເຊິ່ງຕ້ອງກໍານົດທີ່ຕັ້ງຈຸດພິກັດຕອນດິນ, ເນື້ອທີ່ຈໍານວນຕອນດິນ ແລະ ເອກະສານຢັ້ງຢືນສິດນໍາໃຊ້ທີ່ດິນ, ພັນທະແຈ້ງໃຫ້ກັນຊາບດ້ວຍວິທີໃດໜຶ່ງຢູ່ໃສ ແລະ ເວລາໃດ;
5. **ການຄໍ້າປະກັນການປະຕິບັດສັນຍາ** :ແມ່ນການຄໍ້າປະກັນທາງດ້ານກົດໝາຍ ແລະ ການຄໍ້າປະກັນຕາມສັນຍາທີ່ໄດ້ຕົກລົງຮ່ວມກັນ ເຊິ່ງໃນສັນຍາຕ້ອງໄດ້ກໍານົດແຈ້ງກ່ຽວກັບຄວາມຮັບຜິດຊອບຄູ່ສັນຍາແຕ່ລະຝ່າຍ ກ່ຽວກັບເງື່ອນໄຂການຄໍ້າປະກັນການປະຕິບັດສັນຍາເປັນຕົ້ນ: ທີ່ດິນ, ແຮງງານ, ເງິນ, ປັດໄຈການຜະລິດ ສິ່ງທີ່ນໍາມາຄໍ້າປະກັນນັ້ນ ຄູ່ສັນຍາບໍ່ສາມາດໂອນ, ຂາຍ, ມອບ ຫຼື ນໍາໃຊ້ເຂົ້າເປົ້າໝາຍອື່ນໆທີ່ບໍ່ໄດ້ຮັບການເຫັນດີຈາກຄູ່ສັນຍາ;
6. **ສິດ ແລະ ພັນທະຂອງຄູ່ສັນຍາ ແລະ ຜົນສະທ້ອນຂອງການລະເມີດສັນຍາ:** ຕ້ອງກໍານົດສິດຂອງແຕ່ລະຝ່າຍທີ່ສາມາດເຮັດໄດ້ ແລະ ຜົນປະໂຫຍດທີ່ຈະໄດ້ຮັບ ລວມທັງພັນທະທີ່ຕ້ອງໄດ້ປະຕິບັດດ້ວຍຄວາມຮັບຜິດຊອບຕໍ່ການປະຕິບັດສັນຍາ ເພື່ອບັນລຸເປົ້າໝາຍທີ່ວາງໄວ້ ນອກນັ້ນ, ກໍ່ຍັງໄດ້ກໍານົດຜົນສະທ້ອນຂອງການລະເມີດສັນຍາເປັນຕົ້ນ ຄວາມຮັບຜິດຊອບຂອງຄູ່ສັນຍາຕໍ່ການລະເມີດເງື່ອນໄຂຕ່າງໆທີ່ໄດ້ກໍານົດໄວ້ໃນສັນຍາ;
7. **ຮູບການ ແລະ ອົງການແກ້ໄຂຂໍ້ຂັດແຍ່ງ:** ຕ້ອງກໍານົດເຖິງວິທີການແກ້ບັນຫາເປັນຕົ້ນ: ແກ້ໄຂດ້ວຍຄູ່ສັນຍາເອງ ຫຼື ໄກ່ເກ່ຍດ້ວຍບຸກຄົນທີສາມ ຫຼື ຜ່ານກົນໄກການຮ້ອງທຸກຂອງ ສປປ ລາວ ໂດຍສະເພາະແມ່ນສະພາປະຊາຊົນແຂວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງສໍາລັບອົງການແກ້ໄຂຂໍ້ຂັດແຍ່ງໃຫ້ກໍານົດເລີ່ມຈາກຮາກຖານເປັນຕົ້ນ ການຈັດຕັ້ງບ້ານ, ຄະນະກໍາມະປົກຄອງຕາແສງ, ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງ, ຫ້ອງການຍຸຕິທໍາເມືອງ;
8. **ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດສັນຍາກ່ອນກໍານົດ:** ຕ້ອງກໍານົດເງື່ອນໄຂຂອງການປ່ຽນແປງເນື້ອໃນ ແລະ ການສິ້ນສຸດສັນຍາໃຫ້ລະອຽດຈະແຈ້ງ ເພື່ອເປັນຊ່ອງທາງໃນການປັບປຸງສັນຍາໃນຕໍ່ໜ້າ ຫຼືກລຽງຊ່ອງຫວ່າງ ແລະ ອຸປະສັກໃນການປະຕິບັດສັນຍາລວມທັງປ້ອງກັນເຫດການໃດໜຶ່ງຈາກການປະຕິບັດສັນຍາເປັນຕົ້ນການເໜັງຕີງຂອງລາຄາ, ໄພພິບັດ.

## IV. ຂັ້ນຕອນການສ້າງ ແລະ ປະຕິບັດສັນຍາກະສິກໍາ

**4.1 ການສະເໜີ:** ບຸກຄົນ, ນິຕິບຸກຄົນ ແລະ ລວມໝູ່ ມີຈຸດປະສົງດໍາເນີນກິດຈະການ ກ່ຽວກັບກະສິກໍາແບບມີສັນຍາຕ້ອງໄດ້ຄົ້ນຄ້ວາຮ່າງສັນຍາເບື້ອງຕົ້ນ ຕາມແບບພິມ ເພື່ອສະເໜີຕໍ່ບຸກຄົນ, ນິຕິບຸກຄົນລວມໝູ່ ທີ່ຕົນຕ້ອງການເຮັດສັນຍາຮ່ວມກັນນັ້ນ ພ້ອມທັງກໍານົດວັນທີ ແຈ້ງຕອບຢ່າງຊັດເຈນ;

**4.2 ການຕອບສັນຍາ:** ບຸກຄົນນິຕິບຸກຄົນ ຫຼື ລວມໝູ່ ທີ່ໄດ້ຮັບຮ່າງສັນຍາແລ້ວ ຕ້ອງຄົ້ນຄ້ວາເນື້ອໃນຮ່າງສັນຍາດັ່ງກ່າວໃຫ້ລະອຽດຄົບຖ້ວນ ໂດຍສະເພາະເປົ້າໝາຍສັນຍາກໍານົດເວລາປະຕິບັດກິດຈະກໍາ ການຊໍາລະການຄໍ້າປະກັນການປະຕິບັດສັນຍາ, ສິດ ແລະ ພັນທະ ຂອງຄູ່ສັນຍາໃນກໍລະນີມີຄວາມສົນໃຈ ເຂົ້າຮ່ວມ

ສັນຍາ ຕ້ອງແຈ້ງຕອບຜູ້ສະເໜີ ພາຍໃນກໍານົດເວລາ 20 ວັນ ຫຼື ຕາມກໍານົດຂອງຜູ້ສະເໜີ ນັບແຕ່ມື້ໄດ້ຮັບສະເໜີເປັນຕົ້ນໄປ ກໍລະນີມີການຕອບຮັບເຂົ້າຮ່ວມສັນຍາ ຕ້ອງສືບຕໍ່ດໍາເນີນການເຈລະຈາຕໍ່ລອງເງື່ອນໄຂຕ່າງໆຕາມຮ່າງສັນຍາເບື້ອງຕົ້ນ ຜູ້ສະເໜີໄດ້ສ້າງຂຶ້ນນັ້ນ ເພື່ອຮັບປະກັນຄວາມເປັນເອກະພາບ ກ່ອນນໍາໄປສູ່ການເຮັດສັນຍາຮ່ວມກັນ ຕາມແບບຟອມພິມ ( ໒ )

4.3 **ການສ້າງສັນຍາ:** ເມື່ອຜູ້ສະເໜີໄດ້ຮັບຮ່າງສັນຍາ ໄດ້ຄົ້ນຄ້ວາປຶກສາຫາລື ແລະ ເອກະພາບເບື້ອງຕົ້ນ ແລ້ວຕ້ອງດໍາເນີນການສ້າງສັນຍາຕາມ ຫົກບາດກ້າວດັ່ງນີ້:

1) **ການເກັບຂໍ້ມູນ:** ຜູ້ປະກອບການ ຫຼື ນັກລົງທຶນ ທີ່ຈະດໍາເນີນສັນຍາກະສິກໍາຕ້ອງໄດ້ສົມທົບກັບຊາວກະສິກອນ ຫຼື ກຸ່ມຜະລິດກະສິກໍາ ແລະ ສະຫະກອນ ຫຼື ຜູ້ເປັນເປົ້າໝາຍ ໃນການສ້າງສັນຍາ ເພື່ອເກັບກໍາຂໍ້ມູນເນື້ອທີ່ການປູກ, ຊະນິດພືດທີ່ຈະປູກ, ຈໍານວນຜົນຜະລິດ, ທ່າແຮງ ແລະ ສິ່ງທ້າທາຍ ສໍາລັບຄູ່ສັນຍາທີ່ເປັນຊາວກະສິກອນ ກຸ່ມການຜະລິດ ຫຼື ສະຫະກອນຕ້ອງໄດ້ສຶກສາປະຫັວດການເຄື່ອນໄຫວດໍາເນີນທຸລະກິດ ຫຼື ຜູ້ປະກອບການເປັນຕົ້ນ: ຄວາມສາມາດໃນການລົງທຶນ ຄວາມຮັບຜິດຊອບຜູ້ຜະລິດ, ສັງຄົມ ແລະ ສິ່ງແວດລ້ອມ;

2) **ການເຈລະຈາຕໍ່ລອງ:** ເປັນການນໍາສະເໜີນະໂຍບາຍ ຫຼື ເປັນການສະແດງເຈດຈໍານົງຂອງຄູ່ສັນຍາ ບົນພື້ນຖານຄວາມສາມາດຕົວຈິງຂອງຕົນໃນການສະໜອງ ຫຼື ຮັບຜິດຊອບ ອີງປະກອບການກະສິກໍາແບບມີສັນຍາ ເພື່ອໃຫ້ແຕ່ລະຝ່າຍຮັບຮູ້ນໍາກັນໄດ້ຢ່າງຈະແຈ້ງ ໃນບາດກ້າວນີ້ຜູ້ປະກອບການ ແລະ ຊາວກະສິກອນ ກຸ່ມການຜະລິດ ແລະ ສະຫະກອນຕ້ອງເປີດໃຈສົນທະນາເລື່ອງຕ່າງໆ ທີ່ແຕ່ລະຝ່າຍໃຫ້ຄວາມສົນໃຈ;

3) **ການປະເມີນຄວາມເປັນໄປໄດ້ໃນການຮ່ວມມື:** ພາຍຫຼັງແຕ່ລະຝ່າຍໄດ້ຮັບຂໍ້ມູນທີ່ເກັບກໍາມາແລ້ວ ແຕ່ລະຝ່າຍຕ້ອງດໍາເນີນການປະເມີນ ຄວາມເປັນໄປໄດ້ ໃນການເຂົ້າຮ່ວມສັນຍາກະສິກໍາຢ່າງລະອຽດ ແລະ ຮອບດ້ານເພື່ອກໍາໄດ້ສະຖານະພາບ ຜູ້ຈະເຮັດສັນຍາຮ່ວມກັນ ພ້ອມທັງຮັບເອົາ ຫຼື ປະຕິເສດການສ້າງສັນຍາດັ່ງກ່າວ;

4) **ການຮ່າງສັນຍາ:** ເມື່ອຜ່ານການປະເມີນຄວາມເປັນໄປໄດ້ ໃນການຮ່ວມມື ແລະ ແຕ່ລະຝ່າຍ ໄດ້ສະແດງເຈດຈໍານົງຈະສ້າງສັນຍາຮ່ວມກັນແລ້ວ ແຕ່ຜູ້ສະເໜີສ້າງສັນຍາຕ້ອງເປັນເຈົ້າການໃນການສົມທົບກັບຜູ້ຕອບຮັບສັນຍາ ພ້ອມກັນຮ່າງສັນຍາ ຕາມແບບພິມ (໒) ເພື່ອຮັບປະກັນໃຫ້ສັນຍາມີເນື້ອໃນຄົບຖ້ວນສົມບູນຈະແຈ້ງມີຄວາມຈິງ ແລະ ຍຸຕິທໍາ ແລະ ມີສ່ວນຮ່ວມຂອງທຸກໆພາກສ່ວນທີ່ກ່ຽວຂ້ອງໃຫ້ມີການຮັບຮູ້ແຕ່ຫົວທີ;

5) **ການເຊັນສັນຍາ:** ພາຍຫຼັງຜູ້ສະເໜີສ້າງສັນຍາ ແລະ ຜູ້ເຮັດສັນຍາໄດ້ເອກະພາບຕໍ່ກັບເງື່ອນໄຂ ແລະ ເງື່ອນໄຂສັນຍາທີ່ໄດ້ຮ່ວມກັນສ້າງຂຶ້ນ ຫຼື ຜູ້ຕ່າງໜ້າໄດ້ຮັບການມອບສິດຕາມກົດໝາຍລົງລາຍເຊັນຮ່ວມກັນທັງສອງຝ່າຍ ຫຼື ຫຼາຍຝ່າຍ ໂດຍມີການເຊັນພະຍານຢ່າງໜ້ອຍຝ່າຍລະສອງຄົນ ເຊິ່ງໄດ້ຮັບການເຫັນດີຈາກຄູ່ສັນຍາ;

6) **ການຢັ້ງຢືນສັນຍາ:** ພາຍຫຼັງສັນຍາຮ່ວມກັນແລ້ວ ຄູ່ສັນຍາຕ້ອງເອົາສັນຍາດັ່ງກ່າວ ໄປສູ່ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງ ກ່ອນທີ່ທໍາການຜະລິດຕັ້ງຢູ່ພາຍໃນກໍານົດເວລາ 5 ວັນ ຕາມວັນລັດຖະການບໍລິການກະສິກໍາ ທີ່ກໍານົດໄວ້ໃນສັນຍາດັ່ງກ່າວ ຫຼັງຈາກນັ້ນສາມາດນໍາເອົາສັນຍາໄປຢື່ນຢັນນໍາອົງການທະບຽນສານຕາມທີ່ໄດ້ກໍານົດໄວ້ ໃນກົດໝາຍທະບຽນສານ.

4.4 **ການປະຕິບັດສັນຍາ**: ພາຍຫຼັງທີ່ສັນຍາກະສິກໍາໄດ້ຮັບການຢັ້ງຢືນ ຄວາມຖືກຕ້ອງດ້ານວິຊາການ ແລະ ຄູ່ສັນຍາຕ້ອງເປັນເຈົ້າການ ປະສານສົມທົບຈັດຕັ້ງປະຕິບັດສັນຍາວ່າດ້ວຍການຮັບຜິດຊອບສູງ ແລະ ເຂັ້ມງວດກໍລະນີເຫັນວ່າຝ່າຍໃດຝ່າຍໜຶ່ງ ບໍ່ດໍາເນີນໄປຕາມແຜນ ຫຼື ບໍ່ສອດຄ່ອງກັບເນື້ອໃນສັນຍາທີ່ໄດ້ຕົກລົງຮ່ວມກັນ ຫຼື ເກີດມີບັນຫາອື່ນທີ່ເປັນການກີດຂວາງການຈັດຕັ້ງປະຕິບັດສັນຍາ, ຄູ່ສັນຍາຕ້ອງໄດ້ປຶກສາຫາລືກັນ ເພື່ອການແກ້ໄຂບັນຫາ ຮ່ວມກັນໃຫ້ທັນກັບສະພາບການ;

4.5 **ການຊຸກຍູ້ຕິດຕາມ ແລະ ທົບທວນສັນຍາ:** ເພື່ອຮັບປະກັນປະຕິບັດເງື່ອນໄຂ ແລະ ກິດຈະກໍາທີ່ໄດ້ກໍານົດໄວ້ໃນສັນຍາ ທັງສາມາດແກ້ໄຂບັນຫາ ແລະ ຂໍ້ຜິດພາດ ທີ່ອາດຈະເກີດຂຶ້ນ ໃນການຈັດຕັ້ງປະຕິບັດສັນຍາ

ນັ້ນ ຄູ່ສັນຍາຕ້ອງດຳເນີນການຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດສັນຍາຂອງຕົນ ແລະ ຄູ່ສັນຍາຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ພ້ອມທັງຮ່ວມກັນທົບທວນຄືນ ເຖິງຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ ຈາກການປະຕິບັດສັນຍາ ເພື່ອພ້ອມກັນກຳນົດທິດທາງ ແລະ ວິທີການແກ້ໄຂບັນຫາທີ່ອາດຈະເກີດຂຶ້ນຕໍ່ໜ້າ ຢ່າງມີປະສິດທິພາບ;

ສ່ວນງົບປະມານໃນການຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດສັນຍາ ລວມທັງຈັດກອງປະຊຸມທົບທວນຄືນວຽກງານດັ່ງກ່າວ ຕ້ອງມີການຄາດຄະເນງົບປະມານ, ໜ້າວຽກ ແລະ ບຸກຄະລາກອນທີ່ຮັບຜິດຊອບໃສ່ເນື້ອໃນຂອງສັນຍາ ຫຼື ຈະເຮັດເປັນເອກະສານຕິດຄັດສັນຍາ.

## V. ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດ

1. ໃຫ້ຂະແໜງສົ່ງເສີມກະສິກຳ ແລະ ສະຫະກອນ, ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ເປັນໃຈກາງປະສານສົມທົບ ກັບຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຈັດຕັ້ງໂຄສະນາເຜີຍແຜ່ອົບຮົມ ແລະ ປະຕິບັດຄຳສັ່ງແນະນຳສະບັບນີ້ໂດຍສ້າງເປັນແຜນງານ ແລະ ໂຄງການລະອຽດໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
2. ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນເຈົ້າການປະສານສົມທົບ ຫ້ອງການປົກຄອງທ້ອງຖິ່ນກ່ຽວຂ້ອງ ເຜີຍແຜ່ແນະນຳ ເພື່ອອົບຮົມ ໃຫ້ພາກສ່ວນກ່ຽວຂ້ອງເປັນຕົ້ນ: ກຸ່ມຜະລິດສະຫະກອນ, ຜູ້ປະກອບການ ພ້ອມທັງສ້າງແຜນເຄື່ອນໄຫວເປັນແຕ່ລະໄລຍະ;
3. ຂະແໜງສົ່ງເສີມກະສິກຳ ແລະ ສະຫະກອນ, ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ເປັນເຈົ້າການຊຸກຍູ້, ຕິດຕາມກວດກາ ແລະ ປະເມີນການຈັດຕັ້ງປະຕິບັດ ຄຳສັ່ງແນະນຳສະບັບນີ້ ພ້ອມທັງມີການສະຫຼຸບລາຍງານໃຫ້ຂັ້ນເທິງຮັບຊາບເປັນແຕ່ລະໄລຍະ ເພື່ອຮູ້ໄດ້ເຖິງຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບັນຫາການຈັດຕັ້ງປະຕິບັດ ເພື່ອປັບປຸງ ແລະ ແກ້ໄຂບັນຫາໃຫ້ທັນເວລາ.

## VI. ຜົນສັກສິດ

ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກຳມະການປົກຄອງແຂວງ**

ທະບູໄຊ ບັນຊາລິດ

**ບ່ອນນຳສົ່ງ :**

| | |
|---|---|
| 1. ປະທານກຳມະການປົກຄອງເມືອງ 5 ຕົວເມືອງ | 01 ສະບັບ; |
| 2. ພະແນກອຸດສະຫະກຳ ແລະ ການຄ້າແຂວງ | 01 ສະບັບ; |
| 3. ພະແນກການເງິນແຂວງ | 01 ສະບັບ; |
| 4. ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ | 01 ສະບັບ; |
| 5. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ 5 ຕົວເມືອງ | 01 ສະບັບ; |
| 6. ເກັບຮັກສາໄວ້ | 01 ສະບັບ. |